ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 24 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 07 ມິຖຸນາ 2018

ສໍານັກງານ ຄຄຊ
ເລກທີ 0607
ວັນທີ 08 JUN 2018
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ປະຈໍາອາທິດທີ 21-25/05/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

**I. ວຽກງານການເມືອງແນວຄິດ**

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

**II. ການເຄື່ອນໄຫວວຽກງານວິຊາສະເພາະ**

**1. ສະພາບເສດຖະກິດເງິນຕາສາກົນ**

**1.1 ອັດຕາແລກປ່ຽນສາກົນ**

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,60% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກດັດຊະນີຜູ້ຈັດການຝ່າຍຈັດຊື້ຂອງຂະແໜງການບໍລິການເບື້ອງຕົ້ນຂອງສະຫະລັດອາເມລິກາ ໃນເດືອນ 05/2018 ເພີ່ມຂຶ້ນ ຢູ່ໃນລະດັບ 55,7 ຈຸດ ຈາກ 54,6 ຈຸດ ໃນເດືອນຜ່ານມາ ແລະ ຕົວເລກດັດຊະນີຜູ້ຈັດການຝ່າຍຈັດຊື້ຂອງຂະແໜງການຜະລິດ ແລະ ການບໍລິການເບື້ອງຕົ້ນ ຂອງສະຫະພາບເອີຣົບ ໃນເດືອນ 05/2018 ຫຼຸດລົງ ຢູ່ໃນລະດັບ 54,1 ຈຸດ ຈາກ 55,1 ຈຸດ ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 14-18/05/2018 | ອາທິດນີ້ 21-25/05/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1782 | 1,1712 | 0,60% |
| ເຢນ/ໂດລາ | 110,93 | 109,46 | 1,34% |
| ບາດ/ໂດລາ | 32,160 | 31,920 | 0,75% |
| ເປໂຊ/ໂດລາ | 52,37 | 52,58 | -0,40% |
| ຣູເປັຍ/ໂດລາ | 14.150,00 | 14.115,00 | 0,25% |
| ໂດລາສິງກະໂປ/ໂດລາ | 1,3437 | 1,3387 | 0,37% |
| ຢວນ/ໂດລາ | 6,3760 | 6,3871 | -0,17% |